ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----------------

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເລກທີ 105/ຈທວ.ທຄວ.ອຄ

ນະຄອນຫຼວງວຽງຈັນ, ວັນທີ 08 ພຶດສະພາ 2015

ເຖິງ: - ບັນດາພາກສ່ວນຕ່າງໆ ( ທັງພາກລັດ ແລະ ເອກະຊົນ)

- ບໍລິສັດ ລາວ ແມັກສຄີ ສະເຕໂບ ບີ ເວີອາຍ ຈຳກັດຜູ້ດຽວ
- ບໍລິສັດ ລາວ ແມັກສຄີ ສະເຕໂບ 1 ເວີອາຍ ຈຳກັດຜູ້ດຽວ
- ບໍລິສັດ ລາວຄຳ ທີ່ປຶກສາດ້ານການລົງທຶນ ຈຳກັດຜູ້ດຽວ

ເລື່ອງ: ແຈ້ງໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ບໍລິສັດ ລາວ ແມັກສຄີ ສະເຕໂບ ບີ ເວີອາຍ ຈຳກັດຜູ້ດຽວ ແລະ ບໍລິສັດ ລາວ ແມັກສຄີ ສະເຕໂບ 1 ເວີອາຍ ຈຳກັດຜູ້ດຽວ ທີ່ເຄື່ອນໄຫວດຳເນີນທຸລະກິດນອກຂອບເຂດວັດຖຸປະສົງ

- ອີງຕາມ ບົດບັນຍັດ ຂໍ້ 7 ມາດຕາ 206 ຂອງກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013;
- ອີງຕາມ ແຈ້ງການໂຈະການດຳເນີນທຸລະກິດຊົ່ວຄາວ ຫຼື ຖາວອນ ແລະ ການຖອນທະບຽນວິສາຫະກິດ ເລກທີ 1720/ອຄ.ຄພບ,ລົງວັນທີ 09 ກັນຍາ 2011;

ບົນພື້ນຖານໜັງສື ເລກທີ 008/ສຄຄຊ, ລົງວັນທີ 20 ມີນາ 2015, (ເລື່ອງ: ການລາຍງານບັນຫາຕິດພັນກັບບໍລິສັດທີ່ເຄື່ອນໄຫວນອກຂອບເຂດວັດຖຸປະສົງ ຂອງສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ແລະ ອີງໃສ່ ຂໍ້ 5 ກ່ຽວກັບການບໍ່ມາຂຶ້ນທະບຽນວິສາຫະກິດຄືນໃໝ່ຕາມກຳນົດເວລາ. ເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ແຈ້ງໃຫ້ບັນດາພາກສ່ວນຕ່າງໆ (ທັງພາກລັດ ແລະ ເອກະຊົນ) ໃນຂອບເຂດທົ່ວປະເທດ ໄດ້ຮັບຊາບວ່າ:

1. ບໍລິສັດ ລາວ ແມັກສຄີ ສະເຕໂບ ບີ ເວີອາຍ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 0400/ຈທວ, ລົງວັນທີ 12 ພຶດສະພາ 2014 (ອອກໃຫ້ໂດຍເຈົ້າໜ້າທີທະບຽນວິສາຫະກິດພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ) ແລະ ບໍລິສັດ ລາວ ແມັກສຄີ ສະເຕໂບ 1 ເວີອາຍ ຈຳກັດຜູ້ດຽວ ທະບຽນວິສາຫະກິດ ເລກທີ 0415/ຈທວ, ລົງວັນທີ 14 ພຶດສະພາ 2014 (ອອກໃຫ້ໂດຍເຈົ້າໜ້າທີທະບຽນວິສາຫະກິດພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ) ໄດ້ຖືກໂຈະການເຄື່ອນໄຫວທຸລະກິດຊົ່ວຄາວ ໃນທຸກກິດຈະການຂອງບັນດາບໍລິສັດດັ່ງກ່າວ;

2. ກຳນົດເວລາການໂຈະເຄື່ອນໄຫວທຸລະກິດຊົ່ວຄາວ: ເລີ່ມແຕ່ວັນທີ 08 ພຶດສະພາ 2015 ຫາ 08 ມິຖຸນາ 2015;

3. ໃນໄລຍະການໂຈະເຄື່ອນໄຫວທຸລະກິດຊົ່ວຄາວນີ້:

3.1 ວິສາຫະກິດດັ່ງກ່າວ ຕ້ອງເຂົ້າມາພົບພົນນຳເຈົ້າໜ້າທີ່ທະບຽນວິສາຫະກິດ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອແຈ້ງຂຶ້ນທະບຽນວິສາຫະກິດໃໝ່ໃຫ້ຖືກຕ້ອງ;

3.2 ຫ້າມວິສາຫະກິດ ເຄື່ອນໄຫວດຳເນີນທຸລະກິດຢ່າງເດັດຂາດ ແລະ ຕ້ອງນຳເອົາໃບທະບຽນວິສາຫະກິດ (ສະບັບຕົ້ນ) ມາໃຫ້ເຈົ້າໜ້າທີ່ທະບຽນວິສາຫະກິດເກັບຮັກສາໄວ້. ໃນກໍລະນີລະເມີດ ຫຼື ບໍ່ປະຕິບັດຕາມແຈ້ງການສະບັບນີ້ບໍ່ວ່າຈະດ້ວຍເຫດຜົນໃດກໍ່ຕາມ ຈະຖືກປະຕິບັດມາດຕະການຕາມມາດຕາ 212 ຂອງກົດໝາຍວ່າດ້ວຍວິສາຫະກິດ.

ຖ້າພົ້ນກຳນົດເວລາຕາມຂໍ້ 2 ຖັດເທິງນີ້ເຈົ້າໜ້າທີ່ທະບຽນວິສາຫະກິດຈະແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນ.

4. ສຳລັບການໂຈະການເຄື່ອນໄຫວທຸລະກິດ ຂອງ ບໍລິສັດ ລາວຄຳ ທີ່ປຶກສາດ້ານການລົງທຶນ ຈຳກັດຜູ້ດຽວ ແມ່ນໃຫ້ປະຕິບັດຕາມ ແຈ້ງການໂຈະການດຳເນີນທຸລະກິດຊົ່ວຄາວ ສະບັບເລກທີ 0796/ອຄ.ນວ.ທຄວ, ລົງວັນທີ 23 ເມສາ 2015 ຂອງພະແນກອຸດສາຫະກຳ ແລະ ການຄ້າ ນະຄອນຫຼວງວຽງຈັນ ແລະ ໃຫ້ມາປະສານກັບກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ເພື່ອຂຶ້ນທະບຽນຕາມກຳນົດເວລາທີ່ກຳນົດໄວ້ໃນ ຂໍ້ 2 ແລະ 3 ເທິງນີ້. ຖ້າບໍ່ເຂົ້າມາຕາມກຳນົດເວລາທີ່ໄດ້ບົ່ງໄວ້ໃນ ຂໍ້ 2 ເທິງນີ້ ກໍ່ຈະຖືກແຈ້ງໂຈະການເຄື່ອນໄຫວທຸລະກິດຖາວອນເຊັ່ນກັນ.

ແຈ້ງມາເພື່ອຊາບ ແລະ ປະຕິບັດຢ່າງເຂັ້ມງວດ

ເຈົ້າໜ້າທີ່ທະບຽນວິສາຫະກິດ

ເຈົ້າໜ້າທີ່ ທະບຽນວິສາຫະກິດ

ຫຸມແພງ ຄຳພາສິດ

Houmpheng KHAMPHASITH

ບ່ອນສົ່ງ

- ຫ້ອງວ່າການລັດຖະບານ 1 ສະບັບ;
- ສຳນັກງານ ຄຕຊ 1 ສະບັບ;
- ກະຊວງການຄ້າ ແລະ ອຸດສາຫະກຳ 1 ສະບັບ;
- ຫ້ອງວ່າການນະຄອນຫຼວງ 1 ສະບັບ;
- ພະແນກອຸດສາຫະກຳ ແລະ ການຄ້າ ນວ 1 ສະບັບ;
- ສຳເນົາ 1 ສະບັບ.